ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ອົງການໄອຍະການປະຊາຊົນສູງສຸດ — ເລກທີ **650**/ອອປສ.

ນະຄອນຫຼວງວຽງຈັນ, ວັນທີ 11 / 08 / 2015.

# ຂໍ້ຕົກລົງ
# ຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ວ່າ ດ້ວຍ
# ມາດຕະຖານຕຳແໜ່ງບໍລິຫານ ຂອງລັດຖະກອນ ອົງການໄອຍະການປະຊາຊົນ

- ອີງຕາມ ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ສະບັບເລກທີ 10/ສພຊ, ລົງວັນທີ 26 ພະຈິກ 2009.
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ກ່ຽວກັບການເລືອກຕັ້ງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 09/ສພຊ, ລົງວັນທີ 16 ມິຖຸນາ 2011.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 23 ກໍລະກົດ 2008 ວ່າດ້ວຍຕາແໜ່ງບໍລິຫານຂອງລັດຖະກອນແຫ່ງ ສປປ ລາວ.
- ອີງຕາມ ດຳລັດຂອງລັດຖະບານສະບັບເລກທີ 461/, ລົງວັນທີ 09/10/2012 ວ່າດ້ວຍມາດຕະຖານຕຳແໜ່ງບໍລິຫານ ຂອງລັດຖະກອນ ແຫ່ງ ສປປ ລາວ ແລະ ດຳລັດ ເລກທີ 439/ລບ, ລົງວັນທີ 3/12/2014.
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມຈັດຕັ້ງ-ພະນັກງານ ອົງການໄອຍະການປະຊາຊົນສູງສຸດ.

## ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການກ່ຽວກັບປະເພດ ແລະ ມາດຕະຖານຕຳແໜ່ງບໍລິຫານຂອງລັດຖະກອນອົງການໄອຍະການປະຊາຊົນ, ແມ່ນນິຕິກຳເພື່ອເປັນບ່ອນອີງໃນການຄົ້ນຄວ້າການແຕ່ງຕັ້ງ, ສັບຊ້ອນ, ການທຽບຊັ້ນ ແລະ ການປະຕິບັດນະໂຍບາຍອຸດໜູນຕຳແໜ່ງ ໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນ ແຕ່ລະໄລຍະ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະລັດຖະກອນອົງການໄອຍະການປະຊາຊົນ ຊຶ່ງໄດ້ຮັບການແຕ່ງຕັ້ງເຂົ້າໃນຕຳແໜ່ງບໍລິຫານທຸກປະເພດ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ 2
## ປະເພດ ແລະ ມາດຕະຖານຕຳແໜ່ງບໍລິຫານ ແຕ່ລະປະເພດ

ປະເພດ ຕຳແໜ່ງບໍລິຫານ ອົງການໄອຍະການປະຊາຊົນປະກອບມີ 7 ປະເພດ ດັ່ງນີ້:

**ມາດຕາ 3. ຕຳແໜ່ງບໍລິຫານປະເພດ 7** ແມ່ນລັດຖະກອນ ທີ່ໄດ້ຮັບການແຕ່ງ ຕັ້ງໃຫ້ດຳລົງຕຳແໜ່ງເປັນ *ຮອງຫົວໜ້າໜ່ວຍງານຢູ່ອົງການໄອຍະການປະຊາຊົນເຂດ* ຊຶ່ງປະກອບມີມາດຕະຖານ ດັ່ງນີ້:



**3.1 ດ້ານຄຸນທາດການເມືອງ**

1.) ມີຫຼັກໝັ້ນການເມືອງໜັກແໜ້ນ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ ແລະ ຮັກສາຄວາມລັບ; ມີນ້ຳໃຈຮັກອາຊີບຂອງຕົນ, ຮັບໃຊ້ປະຊາຊົນ ແລະ ປະເທດຊາດ;

2.) ມີປະຫວັດຕົ້ນກຳເນີດ-ການເຄື່ອນໄຫວທີ່ດີ, ຈະແຈ້ງ ແລະ ມີຄຸນສົມບັດທີ່ດີ; ບໍ່ເຫັນແກ່ຕົນ, ບໍ່ສວຍໃຊ້ຖານະຕຳແໜ່ງ, ບໍ່ໂລບມາກໂລພາ ແລະ ບໍ່ສໍ້ລາດບັງຫຼວງ; ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆໃນການຈັດຕັ້ງ ແລະ ສັງຄົມ; ເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍ;

3.) ມີຄວາມຮັບຜິດຊອບ ແລະ ມີຫົວຄິດປະດິດສ້າງໃນໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

4.) ບໍ່ອວດອົ່ງທະນົງຕົວ, ບໍ່ລັງເລທໍ້ຖອຍ, ມີຄວາມສາມັກຄີດີ ແລະ ດຸໝັ່ນ-ອົດທົນ;

5.) ຕ້ອງເປັນສະມາຊິກພັກສົມບູນ.

**3.2 ດ້ານຄວາມຮູ້ ແລະ ຄວາມສາມາດ**

1.) ມີຄວາມຮູ້ ດ້ານວິຊາສະເພາະກົດໝາຍ ຫຼື ວິຊາສະເພາະທີ່ກ່ຽວຂ້ອງໃດໜຶ່ງ ຊັ້ນສູງຂຶ້ນໄປ;

2.) ສາມາດບັນທຶກ, ສະຫຼຸບສັງລວມບັນຫາ ແລະ ລາຍງານຢ່າງຖືກຕ້ອງຕາມຄວາມຈິງ ແລະ ທັນເວລາ;

3.) ມີຄວາມສາມາດນຳໃຊ້ວິຊາສະເພາະ ກ່ຽວຂ້ອງເຂົ້າໃນພາກປະຕິບັດຕົວຈິງຢ່າງຖືກຕ້ອງ ແລະ ປະສິດທິພາບ;

4.) ມີຄວາມສະດຸ້ງໄວ ແລະ ກ້າສະແດງຄຳຄິດຄຳເຫັນ ຫຼື ຂໍ້ສະເໜີຢ່າງສ້າງສັນ;

5.) ສາມາດຖ່າຍທອດບົດຮຽນທີ່ດີ ໃຫ້ເພື່ອນຮ່ວມງານ;

6.) ໄດ້ຜ່ານການຮໍ່າຮຽນ ຫຼື ບໍາລຸງຍົກລະດັບທິດສະດີການເມືອງ-ການປົກຄອງຕາມຄວາມເໝາະສົມ;

7.) ມີຄວາມຮູ້ໃນການນໍາໃຊ້ຄອມພິວເຕີ ແລະ ເຕັກໂນໂລຊີທີ່ທັນສະໄໝເພື່ອຮັບໃຊ້ວຽກງານຂອງຕົນ;

8.) ຮູ້ພາສາຕ່າງປະເທດໃດໜຶ່ງທີ່ຈໍາເປັນ ໃນລະດັບທີ່ດີ (ໃນຂົງເຂດທີ່ຈໍາເປັນ).

### 3.3 ດ້ານແບບແຜນວິທີເຮັດວຽກ

1.) ຮູ້ເຮັດວຽກຕາມແຜນການ ແລະ ຮູ້ແນະນໍາວຽກງານໃຫ້ເພື່ອນຮ່ວມງານຕາມຄວາມຮັບຜິດຊອບຂອງຕົນ;

2.) ປະຕິບັດໜ້າທີ່ຕາມຂອບເຂດສິດທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;

3.) ມີຄວາມທຸ່ນທ່ຽງ, ອົດທົນ, ຫ້າວຫັນ, ພະຍາຍາມຊອກຮູ້ຮໍ່າຮຽນ ແລະ ມີມະນຸດສໍາພັນດີ;

4.) ຮູ້ຈັກພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງ;

5.) ມີທັດສະນະມະຫາຊົນ.

### 3.4 ປະສົບການ

- ເປັນວິຊາການ ທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງມາແລ້ວ ຢ່າງໜ້ອຍ 3 ປີ ຂຶ້ນໄປ.

### 3.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ

**ມາດຕາ 4. ຕໍາແໜ່ງບໍລິຫານປະເພດ 6** ແມ່ນລັດຖະກອນທີ່ໄດ້ຮັບການແຕ່ງ ຕັ້ງໃຫ້ດໍາລົງຕໍາແໜ່ງເປັນ:



- *ຮອງຫົວໜ້າຫ້ອງການ ແລະ ຮອງຫົວໜ້າຂະແໜງຂອງອົງການໄອຍະການປະຊາຊົນແຂວງ-ນະຄອນ;*

- *ຫົວໜ້າຫ້ອງການ ແລະ ຫົວໜ້າໜ່ວຍງານຂອງອົງການໄອຍະການປະຊາຊົນ ເຂດ* ຊຶ່ງປະກອບມີມາດຕະຖານ ດັ່ງນີ້:

### 4.1 ດ້ານຄຸນທາດການເມືອງ

1.) ມີຫຼັກໝັ້ນການເມືອງໜັກແໜ້ນ ແລະ ຮູ້ຈັກຈໍາແນກມິດ-ສັດຕູ; ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ ແລະ ຮັກສາຄວາມລັບ;

2.) ມີປະຫວັດຕົ້ນກໍາເນີດການເຄື່ອນໄຫວທີ່ດີ ແລະ ຈະແຈ້ງ, ມີຄຸນສົມບັດທີ່ດີ; ບໍ່ເຫັນແກ່ຕົນ, ບໍ່ສວຍໃຊ້ຖານະຕໍາແໜ່ງ, ບໍ່ໂລບມາກໂລພາ ແລະ ບໍ່ສໍ້ລາດບັງຫຼວງ; ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ໃນການຈັດຕັ້ງ ແລະ ສັງຄົມ; ເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍ;

3.) ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

4.) ບໍ່ອວດອົ່ງທະນົງຕົວ ແລະ ບໍ່ລັ່ງເລທໍ້ຖອຍ;

5.) ຮູ້ຈັກແນວທາງການຕ່າງປະເທດ ຂອງພັກ ແລະ ລັດຖະບານ;

6.) ຕ້ອງເປັນສະມາຊິກພັກສົມບູນ.

### 4.2 ດ້ານຄວາມຮູ້ ແລະ ຄວາມສາມາດ

1.) ມີວິຊາສະເພາະດ້ານ ກົດໝາຍ ຫຼື ວິຊາສະເພາະໃດໜຶ່ງທີ່ໃກ້ຄຽງຊັ້ນສູງຂຶ້ນໄປ;

2.) ມີຄວາມຮັບຮູ້ ແລະ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ນະໂຍບາຍຕ່າງໆຂອງລັດ; ມີຄວາມສາມາດໃນການປະກອບຄໍາເຫັນເຂົ້າໃສ່ການປັບປຸງວຽກງານ ໃນຂົງເຂດທີ່ຕົນຮັບຜິດຊອບ ໃນລະດັບໃດໜຶ່ງ;

3.) ສາມາດບັນທຶກ, ສະຫຼຸບສັງລວມບັນຫາ ແລະ ລາຍງານຢ່າງຖືກຕ້ອງຕາມຄວາມຈິງ ແລະທັນເວລາ;

4.) ມີຄວາມສາມາດນຳໃຊ້ວິຊາສະເພາະທີ່ກ່ຽວຂ້ອງ ເພື່ອໃຫ້ແທດເໝາະສົມຄູ່ກັບຕຳແໜ່ງງານທີ່ຕ້ອງການ ແລະ ໜ້າທີ່ທີ່ໄດ້ຮັບມອບໝາຍພ້ອມທັງສາມາດນຳໃຊ້ວິຊາສະເພາະ ເຂົ້າໃນພາກປະຕິບັດຕົວຈິງໄດ້ຢ່າງເລິກເຊິ່ງ ແລະ ກວ້າງຂວາງ;

5.) ກ້າສະແດງຄຳຄິດຄຳເຫັນ ຫຼື ຂໍ້ສະເໜີ ຢ່າງມີເຫດມີຜົນ;

6.) ສາມາດຖ່າຍທອດບົດຮຽນທີ່ດີໃຫ້ເພື່ອນຮ່ວມງານ;

7.) ໄດ້ຜ່ານການຮ່ຳຮຽນ ຫຼື ບຳລຸງຍົກລະດັບທິດສະດີການເມືອງ ແລະການປົກຄອງ ຕາມຄວາມເໝາະສົມ;

8.) ມີຄວາມຮູ້ໃນການນຳໃຊ້ຄອມພິວເຕີ ແລະ ເຕັກໂນໂລຊີທີ່ທັນສະໄໝເພື່ອຮັບໃຊ້ວຽກງານຂອງຕົນ;

9.) ຮູ້ພາສາຕ່າງປະເທດໃດໜຶ່ງທີ່ຈຳເປັນໃນລະດັບກາງຂຶ້ນໄປ (ໃນຂົງເຂດທີ່ຈຳເປັນ).

### 4.3 ດ້ານແບບແຜນວິທີເຮັດວຽກ

1.) ຮູ້ສ້າງ ແລະ ເຮັດວຽກຕາມແຜນການ, ຮູ້ແນະນຳວຽກໃຫ້ເພື່ອນຮ່ວມງານຕາມຄວາມຮັບຜິດຊອບຂອງຕົນ;

2.) ປະຕິບັດໜ້າທີ່ຕາມຂອບເຂດສິດ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;

3.) ມີຄວາມທຸ່ນທ່ຽງອົດທົນ, ພະຍາຍາມຊອກຮູ້ຮ່ຳຮຽນ ແລະ ມີມະນຸດສຳພັນດີ;

4.) ຮູ້ຈັກພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງ;

5.) ມີທັດສະນະມະຫາຊົນ.



### 4.4 ປະສົບການ

- ເຄີຍດຳລົງຕຳແໜ່ງບໍລິຫານປະເພດ 7 ມາແລ້ວຢ່າງໜ້ອຍ 3 ປີຂຶ້ນໄປ ຫຼື ເປັນພະນັກງານວິຊາການທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງໂດຍກົງມາແລ້ວຢ່າງໜ້ອຍ 4 ປີ ຂຶ້ນໄປ.

### 4.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ.

**ມາດຕາ 5. ຕຳແໜ່ງບໍລິຫານປະເພດ 5** ແມ່ນລັດຖະກອນທີ່ໄດ້ຮັບການ ແຕ່ງຕັ້ງໃຫ້ດຳລົງຕຳແໜ່ງເປັນ:

- *ຮອງ ຫົວໜ້າພະແນກ ຂອງອົງການໄອຍະການປະຊາຊົນສູງສຸດ;*
- *ຮອງ ຫົວໜ້າຫ້ອງການ ແລະ ຮອງ ຫົວໜ້າພະແນກຂອງອົງການໄອຍະການປະຊາຊົນພາກ;*
- *ຫົວໜ້າຫ້ອງການ, ຫົວໜ້າຂະແໜງຂອງອົງການໄອຍະການປະຊາຊົນ ແຂວງ-ນະຄອນ* ຊຶ່ງປະກອບມີມາດຕະຖານດັ່ງນີ້:

### 5.1 ດ້ານຄຸນທາດການເມືອງ

1.) ມີຫຼັກໝັ້ນການເມືອງໜັກແໜ້ນ ແລະ ຮູ້ຈັກຈຳແນກມິດ-ສັດຕູ; ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ ແລະ ຮັກສາຄວາມລັບໄດ້ດີ;

2.) ມີປະຫວັດຕົ້ນກຳເນີດ-ການເຄື່ອນໄຫວທີ່ດີ ແລະ ຈະແຈ້ງ, ມີແບບແຜນການດຳລົງຊີວິດປອດໃສຂາວສະອາດ; ມີຄຸນນະທຳ ແລະ ມີຄວາມຍຸຕິທຳ; ບໍ່ເຫັນແກ່ຜົນປະໂຫຍດອັນບໍ່ຊອບທຳຂອງຕົນ; ບໍ່ສວຍໃຊ້ຖານະຕຳແໜ່ງ, ບໍ່ໂລບມາກໂລພາ, ບໍ່ສໍ້ລາດບັງຫຼວງ; ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆໃນການຈັດຕັ້ງ ແລະ ສັງຄົມ; ເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍ;

3.) ປົກປ້ອງ ແລະ ປະຕິບັດຕາມແນວທາງ, ມະຕິ, ຄຳສັ່ງຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະ

ກິດ-ສັງຄົມ ທີ່ກ່ຽວຂ້ອງເຖິງໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນໄດ້ເປັນຢ່າງດີ;

4.) ມີຄວາມຕື່ນຕົວ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

5.) ກ້າປ່ຽນແປງຈຸດອ່ອນຂອງຕົນ, ບໍ່ອວດອົ່ງທະນົງຕົວ ແລະ ບໍ່ລັ່ງເລທໍ້ຖອຍ;

6.) ຮູ້ຈັກຈັດຕັ້ງປະຕິບັດແນວທາງການຕ່າງປະເທດ ຂອງພັກ-ລັດຖະບານ;

7.) ຕ້ອງເປັນສະມາຊິກພັກສົມບູນ.

## 5.2 ດ້ານຄວາມຮູ້ ແລະ ຄວາມສາມາດ

1.) ມີວິຊາສະເພາະດ້ານກົດໝາຍ, ການເມືອງ-ການປົກຄອງ ຫຼື ວິຊາສະເພາະທີ່ກ່ຽວຂ້ອງ ຂັ້ນສູງຂຶ້ນໄປ.

2.) ມີຄວາມຮູ້ ແລະ ເຊື່ອມຊຶມແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍ ແລະ ນະໂຍບາຍຕ່າງໆຂອງລັດ; ມີຄວາມສາມາດໃນການປະກອບຄຳເຫັນ ເຂົ້າໃສ່ການປັບປຸງບູລະນະແນວທາງນະໂຍບາຍ ແລະ ລະບຽບກົດໝາຍຕ່າງໆ ໃນຂົງເຂດທີ່ຕິດພັນກັບວຽກງານຂອງຕົນ;

3.) ສາມາດ ສ້າງແຜນການ, ໂຄງການກ່ຽວກັບວຽກງານຂອງຕົນ ແລະສາມາດສັງລວມ, ວິໄຈ-ໄຈ້ແຍກບັນຫາຢ່າງພາວະວິໄສ, ສະຫຼຸບລາຍງານຖືກຕ້ອງຕາມຄວາມຈິງ ແລະ ທັນສະພາບການ;

4.) ມີລະດັບຄວາມຮູ້ດ້ານວິຊາການຢ່າງກວ້າງຂວາງ ແລະ ມີຄວາມສາມາດກຳໄດ້ຂໍ້ມູນຂ່າວສານທັນເວລາ;

5.) ກ້າສະເໜີຂໍ້ຄິດເຫັນຢ່າງສົມເຫດສົມຜົນ, ສ້າງສັນຕໍ່ຂັ້ນເທິງ ແລະມີຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;



6.) ໄດ້ຜ່ານການຮ່ຳຮຽນ ຫຼື ບຳລຸງຍົກລະດັບທິດສະດີການເມືອງ ແລະການປົກຄອງຕາມຄວາມເໝາະສົມ;

7.) ສາມາດຖ່າຍທອດບົດຮຽນ ແລະ ປະສົບການໃຫ້ແກ່ເພື່ອນຮ່ວມງານ;

8.) ມີຄວາມຮູ້ໃນການນຳໃຊ້ຄອມພິວເຕີທີ່ທັນສະໄໝ ເພື່ອຮັບໃຊ້ວຽກງານຂອງຕົນ;

9.) ຮູ້ພາສາຕ່າງປະເທດໃດໜຶ່ງທີ່ຈຳເປັນ ໃນລະດັບກາງຂຶ້ນໄປ.

## 5.3 ດ້ານແບບແຜນວິທີເຮັດວຽກ

1.) ເຮັດວຽກມີແຜນການ, ມີການປຶກສາຫາລື ແລະ ແບ່ງງານໃຫ້ວິຊາການ ໃນຄວາມຮັບຜິດຊອບຂອງຕົນ;

2.) ປະຕິບັດໜ້າທີ່ຕາມຂອບເຂດສິດ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;

3.) ມີຄວາມທຸ່ນທ່ຽງ, ອົດທົນ, ພະຍາຍາມຊອກຮູ້ຮ່ຳຮຽນ ແລະ ມີມະນຸດສຳພັນດີ;

4.) ຮູ້ຈັກພົວພັນປະສານງານກັບພາກສ່ວນກ່ຽວຂ້ອງເປັນຢ່າງດີ;

5.) ມີທັດສະນະມະຫາຊົນຢ່າງຖືກຕ້ອງ.

## 5.4 ປະສົບການ

- ເຄີຍລົງຕຳແໜ່ງບໍລິຫານປະເພດ 6 ມາແລ້ວ ຢ່າງໜ້ອຍ 3 ປີ ຂຶ້ນໄປ ຫຼື ເປັນພະນັກງານວິຊາການທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງໂດຍກົງມາແລ້ວ ຢ່າງໜ້ອຍ 5 ປີ ຂຶ້ນໄປ.

## 5.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ.

### 6.3 ດ້ານແບບແຜນວິທີເຮັດວຽກ

1.) ເຮັດວຽກມີແຜນການ, ມີການປຶກສາຫາລື, ຕົກລົງເປັນໝູ່ຄະນະ ແລະ ຮູ້ແບ່ງງານໃຫ້ວິຊາການໃນຄວາມຮັບຜິດຊອບຂອງຕົນ;
2.) ປະຕິບັດໜ້າທີ່ຕາມຂອບເຂດສິດ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;
3.) ມີຄວາມທຸ່ນທ່ຽງ, ອົດທົນ, ພະຍາຍາມຊອກຮູ້ຮໍ່າຮຽນ ແລະ ມີມະນຸດສໍາພັນດີ;
4.) ຮູ້ຈັກພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ຢ່າງຄ່ອງຊ່ອງ ແລະ ກົມກຽວ;
5.) ມີທັດສະນະມະຫາຊົນຢ່າງຖືກຕ້ອງ ແລະ ໄດ້ຮັບຄວາມເຊື່ອຖື ຮັກແພງຈາກມະຫາຊົນ.

### 6.4 ປະສົບການ

- ເຄີຍດໍາລົງຕໍາແໜ່ງບໍລິຫານປະເພດ 5 ມາແລ້ວ ຢ່າງໜ້ອຍ 2 ປີ ຂຶ້ນໄປ.
- ໃນກໍລະນີ ຫົວໜ້າໜ່ວຍງານ ອຍກ ເຂດ (ປະເພດ 6) ຈະແຕ່ງຕັ້ງເປັນ ຮອງຫົວໜ້າ ອຍກ ເຂດ ຫຼື ຕໍາ ແໜ່ງບໍລິຫານປະເພດ 4 ຕ້ອງໄດ້ດໍາລົງຕໍາແໜ່ງບໍລິຫານປະເພດ 6 ມາແລ້ວ ຢ່າງໜ້ອຍ 5 ປີ ຂຶ້ນໄປ.

### 6.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ.

**ມາດຕາ 7. ຕໍາແໜ່ງບໍລິຫານປະເພດ 3** ແມ່ນ ລັດຖະກອນທີ່ໄດ້ຮັບ ການແຕ່ງຕັ້ງໃຫ້ດໍາລົງຕໍາແໜ່ງເປັນ:



- *ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ ອົງການໄອຍະການປະຊາຊົນສູງສຸດ;*
- *ຮອງຫົວໜ້າ ອົງການໄອຍະການປະຊາຊົນ ແຂວງ-ນະຄອນ;*
- *ຫົວໜ້າອົງການໄອຍະການປະຊາຊົນເຂດ* ຊຶ່ງປະກອບມີມາດຕະຖານ ດັ່ງນີ້:

### 7.1 ດ້ານຄຸນທາດການເມືອງ

1.) ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຮູ້ຈັກຈໍາແນກມິດ-ສັດຕູຈະແຈ້ງ, ບໍ່ມີແນວຄິດຫຼາຍພັກຫຼາຍເຄົ້າ, ບໍ່ຄອນແຄນຕໍ່ເລ່ຫຼ່ຽມກົນອຸບາຍມ້າງເພຂອງພວກຄົນບໍ່ຫວັງດີຢູ່ພາຍໃນ ແລະ ຕ່າງປະເທດ;
2.) ມີປະຫວັດຕົ້ນກໍາເນີດ-ການເຄື່ອນໄຫວທີ່ດີ ແລະ ຈະແຈ້ງ, ມີແບບແຜນການດໍາລົງຊີວິດປອດໃສຂາວສະອາດ; ມີຄຸນນະທໍາ ແລະ ມີຄວາມຍຸຕິທໍາ, ບໍ່ເຫັນແກ່ຜົນປະໂຫຍດອັນບໍ່ຊອບທໍາຂອງຈຸ້ມເຈື້ອ-ເຊື້ອສາຍ ຫຼື ກຸ່ມກ້ອນຂອງຕົນ; ບໍ່ສວຍໃຊ້ຖານະຕໍາແໜ່ງ, ບໍ່ໂລບມາກໂລພາ ແລະ ບໍ່ສໍ້ລາດບັງຫຼວງ; ເປັນເຈົ້າການຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ ໃນການຈັດຕັ້ງ ແລະ ສັງຄົມ; ເປັນແບບຢ່າງເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ;
3.) ຮູ້ຈັກຈັດຕັ້ງຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ມະຕິຄໍາສັ່ງຂອງຂັ້ນເທິງທີ່ກ່ຽວຂ້ອງເຖິງໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນໄດ້ເປັນຢ່າງດີ;
4.) ມີຄວາມຕື່ນຕົວ ແລະ ມີຄວາມຮັບຜິດຊອບຕໍ່ຜົນໄດ້-ຜົນເສຍໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

5.) ປົກປ້ອງແນວທາງ, ແຜນນະໂຍບາຍຂອງພັກ, ກ້າປ່ຽນແປງຈຸດອ່ອນຂອງຕົນ, ບໍ່ອວດອົ່ງທະນົງຕົວ ແລະ ບໍ່ລັ່ງເລທໍ້ຖອຍ;

6.) ສັດຊື່ບໍລິສຸດ, ທ່ຽງທຳ, ດຸໝັ່ນຂະຫຍັນພຽນ, ຖືຜົນປະໂຫຍດສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ, ເປັນແບບຢ່າງທີ່ດີ, ມີຄຸນນະທຳ ແລະ ປະຕິບັດຕາມການຊີ້ນຳຂອງຂັ້ນເທິງຢ່າງເຂັ້ມງວດ;

7.) ຮູ້ຈັກຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ - ລັດຖະບານຢ່າງຖືກຕ້ອງ;

8.) ຕ້ອງເປັນສະມາຊິກພັກສົມບູນ.

## 7.2 ດ້ານຄວາມຮູ້ ແລະ ຄວາມສາມາດ

1.) ມີວິຊາສະເພາະ ກົດໝາຍຍຸຕິທຳ, ກົດໝາຍປົກຄອງ, ທິດສະດີການເມືອງ, ລັດຖະສາດ, ວິທະຍາສາດການເມືອງ ຫຼື ວິຊາສະເພາະທີ່ກ່ຽວຂ້ອງໃດໜຶ່ງ ຊັ້ນສູງຂຶ້ນໄປ;

2.) ມີຄວາມຮູ້ທາງດ້ານທິດສະດີການເມືອງ, ການປົກຄອງ ແລະ ມີຄວາມຮູ້ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມໂດຍພື້ນຖານ, ມີວິໃສທັດທີ່ດີ ແລະ ມີວິທີການແກ້ໄຂທີ່ຖືກຕ້ອງ;

3.) ກຳແໜ້ນແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ ແລະ ນະໂຍບາຍຕ່າງໆ; ມີຄວາມສາມາດໃນການຄົ້ນຄວ້າຂີດຂຽນ ແລະ ປະກອບຄຳເຫັນເຂົ້າໃສ່ການປັບປຸງບູລະນະແນວທາງນະໂຍບາຍ ແລະ ລະບຽບກົດໝາຍ;

4.) ມີຄວາມສາມາດຫັນບັນດາແນວທາງນະໂຍບາຍຂອງພັກ ກ່ຽວກັບຂະແໜງການຂອງຕົນໃຫ້ກາຍເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນດີ;



5.) ຮູ້ຈັດຕັ້ງ, ຮູ້ຂົນຂວາຍ, ປຸກລະດົມພະນັກງານ-ລັດຖະກອນ ແລະ ປະຊາຊົນເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

6.) ໄດ້ຜ່ານການກໍ່ສ້າງ ຫຼື ບຳລຸງທິດສະດີມາກ-ເລນິນ, ການເມືອງ ແລະ ການປົກຄອງຕາມຫຼັກສູດ ຊັ້ນກາງຂຶ້ນໄປ;

7.) ມີຄວາມຮູ້ ແລະ ສາມາດນຳໃຊ້ຄອມພິວເຕີ ຂັ້ນພື້ນຖານຂຶ້ນໄປ;

8.) ຮູ້ພາສາຕ່າງປະເທດໃດໜຶ່ງ ທີ່ຈຳເປັນໃນລະດັບກາງຂຶ້ນໄປ.

## 7.3 ດ້ານແບບແຜນວິທີເຮັດວຽກ

1.) ມີແບບແຜນວິທີການເຮັດວຽກທີ່ມີວິທະຍາສາດ ບົນພື້ນຖານຫຼັກວິຊາການແທດເໝາະກັບຕົວຈິງ;

2.) ປະຕິບັດໜ້າທີ່ ຕາມຂອບເຂດສິດ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;

3.) ເຮັດວຽກມີແຜນການ, ມີຈຸດສຸມ, ມີຄາດໝາຍ, ມີການຕິດຕາມກວດກາ ແລະ ຖອດຖອນບົດຮຽນ;

4.) ມີຄວາມຂະຫຍັນ, ຫ້າວຫັນ, ແກ້ໄຂວຽກງານໃຫ້ທັນກັບເວລາ, ມີຫົວຄິດປະດິດສ້າງ ແລະ ແທດເໝາະກັບຕົວຈິງ ບົນພື້ນຖານແນວທາງນະໂຍບາຍຂອງພັກ;

5.) ກ້າຕັດສິນບັນຫາຕາມການມອບໝາຍ ແລະ ມີຄວາມຮັບຜິດຊອບ;

6.) ຮູ້ຈັກພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ;

7.) ມີທັດສະນະມະຫາຊົນຢ່າງຖືກຕ້ອງ ແລະ ໄດ້ຮັບຄວາມເຊື່ອຖືຮັກແພງຈາກມະຫາຊົນ.

### 7.4 ປະສົບການ

- ເຄີຍດຳລົງຕຳແໜ່ງບໍລິຫານປະເພດ 4 ມາແລ້ວຢ່າງໜ້ອຍ 2 ປີ ຂຶ້ນໄປ.
- ໃນກໍລະນີ ຫົວໜ້າຂະແໜງ ອຍກ ແຂວງ, ນະຄອນ (ປະເພດ 5) ຈະແຕ່ງຕັ້ງເປັນຮອງຫົວໜ້າ ອຍກ ແຂວງ, ນະຄອນ ຫຼື ຕຳແໜ່ງບໍລິຫານປະເພດ 3 ຕ້ອງໄດ້ດຳລົງຕຳແໜ່ງບໍລິຫານປະເພດ 5 ມາແລ້ວ ຢ່າງໜ້ອຍ 5 ປີ ຂຶ້ນໄປ.

### 7.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ.

**ມາດຕາ 8. ຕຳແໜ່ງບໍລິຫານປະເພດ 2** ແມ່ນ ລັດຖະກອນທີ່ໄດ້ຮັບ ການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງເປັນ:

- *ຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ຫົວໜ້າສະຖາບັນ ອົງການໄອຍະການປະຊາຊົນສູງສຸດ;*
- *ຫົວໜ້າ ອົງການໄອຍະການປະຊາຊົນ ແຂວງ-ນະຄອນ;*
- *ຮອງຫົວໜ້າ ອົງການໄອຍະການປະຊາຊົນ ພາກ* ຊຶ່ງ ປະກອບມີມາດຕະຖານ ດັ່ງນີ້:

### 8.1 ດ້ານຄຸນທາດການເມືອງ

1.) ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຮູ້ຈັກຈຳແນກມິດ-ສັດຕູຈະແຈ້ງ, ບໍ່ມີແນວຄິດຫຼາຍພັກຫຼາຍເຄົ້າ, ບໍ່ຄອນແຄນຕໍ່ເລ່ຫຼ່ຽມກົນອຸບາຍມ້າງເພຂອງພວກຄົນບໍ່ຫວັງດີຢູ່ພາຍໃນ ແລະ ຕ່າງປະເທດ;
2.) ມີປະຫວັດຕົ້ນກຳເນີດ-ການເຄື່ອນໄຫວທີ່ດີ ແລະ ຈະແຈ້ງ, ມີແບບແຜນການດຳລົງຊີວິດປອດໃສຂາວສະອາດ; ມີຄຸນນະທຳ



ແລະ ມີຄວາມຍຸຕິທຳ; ບໍ່ເຫັນແກ່ຜົນປະໂຫຍດອັນບໍ່ຊອບທຳຂອງຈຸ້ມເຈື້ອ-ເຊື້ອສາຍ ຫຼື ກຸ່ມກ້ອນຂອງຕົນ; ບໍ່ສວຍໃຊ້ຖານະຕຳແໜ່ງ, ບໍ່ໂລບມາກໂລພາ ແລະ ບໍ່ສໍ້ລາດບັງຫຼວງ; ເປັນເຈົ້າການຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ ໃນການຈັດຕັ້ງ ແລະ ສັງຄົມ; ເປັນແບບຢ່າງເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ;
3.) ເປັນເອກະພາບ ແລະ ຮູ້ຈັກຈັດຕັ້ງ ຜັນຂະຫຍາຍແນວທາງ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດສັງຄົມ ທີ່ກ່ຽວຂ້ອງກັບໜ້າທີ່ການເມືອງ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ປະກົດຜົນເປັນຈິງ;
4.) ມີຄວາມຕື່ນຕົວ ແລະ ມີຄວາມຮັບຜິດຊອບຕໍ່ຜົນໄດ້ຜົນເສຍໃນການປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍ;
5.) ຮູ້ຈັກຕໍ່ສູ້ກັບບັນຫາທັດສະນະທີ່ຜິດເຂວ, ປົກປ້ອງແນວທາງແຜນນະໂຍບາຍຂອງພັກ, ກ້າປ່ຽນແປງຈຸດອ່ອນຂອງຕົນ, ບໍ່ອວດອົ່ງທະນົງຕົວ ແລະ ບໍ່ລັ່ງເລທໍ້ຖອຍ;
6.) ຮູ້ຈັກຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ-ລັດຖະບານຢ່າງຖືກຕ້ອງ;
7.) ຕ້ອງແມ່ນສະມາຊິກພັກສົມບູນ ແລະ ມີປະສົບການໃນການນຳພາ.

### 8.2 ດ້ານຄວາມຮູ້ ແລະ ຄວາມສາມາດ

1.) ມີວິຊາສະເພາະກົດໝາຍຍຸຕິທຳ, ກົດໝາຍປົກຄອງ, ທິດສະດີການເມືອງ, ລັດຖະສາດ, ວິທະຍາສາດການເມືອງ ຫຼື ວິຊາສະເພາະທີ່ກ່ຽວຂ້ອງໃດໜຶ່ງຊັ້ນສູງຂຶ້ນໄປ;
2.) ມີຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ, ມີລະດັບການຄົ້ນຄວ້າ ແລະ ຄວາມຮູ້ໃນການຄຸ້ມຄອງລັດ, ຄຸ້ມຄອງເສດ

ຖະກິດ-ສັງຄົມໂດຍພື້ນຖານ; ມີວິໄສທັດກວ້າງໄກ ແລະ ມີວິທີການແກ້ໄຂທີ່ຖືກຕ້ອງ ແລະ ທັນເວລາ;

3.) ກຳແໜ້ນແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ; ມີຄວາມສາມາດໃນການຄົ້ນຄວ້າຂີດຂຽນ ແລະ ປະກອບຄຳເຫັນເຂົ້າໃສ່ການປັບປຸງບູລະນະ ແນວທາງນະໂຍບາຍ ແລະ ລະບຽບກົດໝາຍຕ່າງໆ;

4.) ມີຄວາມສາມາດຄົ້ນຄວ້າ ແລະ ຫັນບັນດາທິດທາງຍຸດທະສາດ, ແຜນນະໂຍບາຍຂອງພັກ ກ່ຽວກັບຂະແໜງການຂອງຕົນໃຫ້ກາຍເປັນອັນລະອຽດ, ສາມາດຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ; ຮູ້ປຸກລະດົມພະນັກງານ-ລັດຖະກອນ ແລະ ປະຊາຊົນເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

5.) ຮູ້ເຮັດວຽກການເມືອງ-ແນວຄິດ ແລະ ມີບົດຮຽນໃນວຽກງານກໍ່ສ້າງພັກ, ສ້າງພະນັກງານ, ຮູ້ຄຸ້ມຄອງ ແລະ ນຳໃຊ້ພະນັກງານຢ່າງເໝາະສົມ, ຮູ້ນຳພາອົງການຈັດຕັ້ງມະຫາຊົນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນ;

6.) ໄດ້ຜ່ານການກໍ່ສ້າງ ຫຼື ບຳລຸງທິດສະດີມາກ-ເລນິນ, ການເມືອງ-ການປົກຄອງຕາມຫຼັກສູດຊັ້ນສູງຂຶ້ນໄປ;

7.) ມີລະດັບວິຊາສະເພາະ ທີ່ແນ່ນອນກ່ຽວກັບວຽກງານຂອງຕົນເອງຮັບຜິດຊອບ;

8.) ມີຄວາມຮູ້ ແລະ ສາມາດນຳໃຊ້ຄອມພິວເຕີ ໃນລະດັບດີ;

9.) ຮູ້ພາສາຕ່າງປະເທດໃດໜຶ່ງ ທີ່ຈຳເປັນໃນລະດັບກາງຂຶ້ນໄປ.



## 8.3 ດ້ານແບບແຜນວິທີເຮັດວຽກ

1.) ມີແບບແຜນວິທີການເຮັດວຽກ ທີ່ມີວິທະຍາສາດບົນພື້ນຖານຫຼັກວິຊາການແທດເໝາະກັບຕົວຈິງ;

2.) ປະຕິບັດໜ້າທີ່ຕາມຂອບເຂດສິດ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;

3.) ເຮັດວຽກມີແຜນການ, ມີຈຸດສຸມ, ມີຄາດໝາຍ, ມີການຕິດຕາມກວດກາ ແລະ ຖອດຖອນບົດຮຽນ ເພື່ອເສີມຂະຫຍາຍດ້ານດີ ດັດແປງແກ້ໄຂດ້ານອ່ອນຢ່າງທັນເວລາ;

4.) ມີຄວາມຂະຫຍັນ, ຫ້າວຫັນ, ແກ້ໄຂວຽກງານໃຫ້ທັນກັບເວລາ, ມີຫົວຄິດປະດິດສ້າງ ແລະ ແທດເໝາະກັບຕົວຈິງບົນພື້ນຖານແນວທາງນະໂຍບາຍຂອງພັກ;

5.) ກ້າຕັດສິນບັນຫາຕາມການມອບໝາຍ ແລະ ມີຄວາມຮັບຜິດຊອບ;

6.) ຮູ້ຈັກພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ;

7.) ມີທັດສະນະມະຫາຊົນຢ່າງຖືກຕ້ອງ ແລະ ໄດ້ຮັບຄວາມເຊື່ອຖືຮັກແພງຈາກມະຫາຊົນ.

## 8.4 ປະສົບການ

- ເຄີຍດຳລົງຕຳແໜ່ງບໍລິຫານປະເພດ 3 ມາແລ້ວ ຢ່າງໜ້ອຍ 2 ປີ ຂຶ້ນໄປ.
- ໃນກໍລະນີ ຫົວໜ້າຫ້ອງການ, ຫົວໜ້າພະແນກ ອຍກ ພາກ (ປະເພດ 4) ຈະແຕ່ງຕັ້ງເປັນ ຮອງຫົວໜ້າ ອຍກ ພາກ ຫຼື ຕຳແໜ່ງບໍລິຫານປະເພດ 2 ຕ້ອງໄດ້ດຳລົງຕຳແໜ່ງບໍລິຫານປະເພດ 4 ມາແລ້ວ ຢ່າງໜ້ອຍ 5 ປີ ຂຶ້ນໄປ.

## 8.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ.

**ມາດຕາ 9. ຕຳແໜ່ງບໍລິຫານປະເພດ 1** ແມ່ນລັດຖະກອນທີ່ໄດ້ຮັບການແຕ່ງ ຕັ້ງໃຫ້ດຳລົງຕຳແໜ່ງເປັນ:

- *ຜູ້ຊ່ວຍ ຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ;*
- *ຫົວໜ້າອົງການໄອຍະການປະຊາຊົນພາກ* ຊຶ່ງປະກອບມີມາດຕະຖານ ດັ່ງນີ້:

### 9.1 ດ້ານຄຸນທາດການເມືອງ

1.) ມີທັດສະນະຫຼັກໝັ້ນການເມືອງ-ແນວຄິດໜັກແໜ້ນ, ຮູ້ຈັກຈຳແນກມິດ-ສັດຕູຈະແຈ້ງ, ບໍ່ມີແນວຄິດຫຼາຍພັກຫຼາຍເຄົ້າ, ບໍ່ຄອນແຄນຕໍ່ເລ່ຫຼ່ຽມກົນອຸບາຍມ້າງເພຂອງພວກຄົນບໍ່ຫວັງດີ ຢູ່ພາຍໃນ ແລະ ຕ່າງປະເທດ;

2.) ມີປະຫວັດຕົ້ນກຳເນີດ-ການເຄື່ອນໄຫວທີ່ດີ ແລະ ຈະແຈ້ງ, ມີແບບແຜນການດຳລົງຊີວິດປອດໃສຂາວສະອາດ; ມີຄຸນນະທຳ ແລະ ມີຄວາມຍຸຕິທຳ, ບໍ່ເຫັນແກ່ຜົນປະໂຫຍດອັນບໍ່ຊອບທຳຂອງຈຸ້ມເຈື້ອ-ເຊື້ອສາຍ ຫຼື ກຸ່ມກ້ອນຂອງຕົນ, ບໍ່ສວຍໃຊ້ຖານະຕຳແໜ່ງ, ບໍ່ໂລບມາກໂລພາ ແລະ ບໍ່ສໍ້ລາດບັງຫຼວງ; ເປັນເຈົ້າການຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ ໃນການຈັດຕັ້ງ ແລະ ສັງຄົມ; ເປັນແບບຢ່າງເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ;

3.) ຮັບໃຊ້ປະຊາຊົນດ້ວຍຄວາມຈິງໃຈ ແລະ ຖືກຕ້ອງຕາມລະບຽບ-ກົດໝາຍ;

4.) ເປັນເອກະພາບສູງກັບແນວທາງປ່ຽນແປງໃໝ່ຂອງພັກ ແລະ ຮູ້ຈັກຈັດຕັ້ງຜັນຂະຫຍາຍແນວທາງ, ມະຕິ, ຄຳສັ່ງຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະ



ກິດ-ສັງຄົມ ທີ່ກ່ຽວຂ້ອງກັບໜ້າທີ່ການເມືອງ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ປະກົດຜົນເປັນຈິງ;

5.) ມີສະຕິຕໍ່ການຈັດຕັ້ງປະຕິບັດລະບຽບວິໄນຢ່າງເຂັ້ມງວດ, ມີຄວາມຕື່ນຕົວ ແລະ ມີຄວາມຮັບຜິດຊອບສູງຕໍ່ຜົນໄດ້-ຜົນເສຍ ໃນການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;

6.) ຮູ້ຈັກຕໍ່ສູ້ກັບບັນຫາທັດສະນະທີ່ຜິດເຂວ, ປົກປ້ອງແນວທາງ, ແຜນນະໂຍບາຍຂອງພັກ, ກ້າປ່ຽນແປງຈຸດອ່ອນຂອງຕົນ, ບໍ່ອວດອົ່ງທະນົງຕົວ ແລະ ບໍ່ລັງເລທໍ້ຖອຍ;

7.) ຮູ້ຈັກຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ - ລັດຖະບານຢ່າງຖືກຕ້ອງ.

### 9.2 ດ້ານຄວາມຮູ້ ແລະ ຄວາມສາມາດ

1.) ມີວິຊາສະເພາະກົດໝາຍຍຸຕິທຳ, ກົດໝາຍປົກຄອງ, ທິດສະດີການເມືອງ, ລັດຖະສາດ, ວິທະຍາສາດການເມືອງ ຫຼື ວິຊາສະເພາະທີ່ກ່ຽວຂ້ອງໃດໜຶ່ງ ຊັ້ນສູງຂຶ້ນໄປ;

2.) ມີຄວາມຮູ້ທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ມີຄວາມຮູ້ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມໂດຍພື້ນຖານ; ຮູ້ຫຼັກມູນວິທະຍາສາດຂອງລັດທິມາກ-ເລນິນ, ມີວິໄສທັດກວ້າງໄກ, ມີລະດັບການຄົ້ນຄວ້າ ແລະ ມີວິທີການແກ້ໄຂ ທີ່ຖືກຕ້ອງ ແລະ ທັນເວລາ;

3.) ກຳແໜ້ນແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ; ມີຄວາມສາມາດໃນການຄົ້ນຄວ້າຂີດຂຽນ ແລະ ປະກອບຄຳເຫັນເຂົ້າໃສ່ການປັບປຸງບູລະນະແນວທາງນະໂຍບາຍ ແລະ ລະບຽບກົດໝາຍຕ່າງໆ;

4.) ມີຄວາມສາມາດຄົ້ນຄວ້າ ແລະ ຫັນບັນດາທິດທາງຍຸດທະສາດ, ແຜນນະໂຍບາຍຂອງພັກ-ລັດວາງອອກໃຫ້ເປັນແຜນຍຸດທະສາດ, ແຜນງານ, ໂຄງການ, ວິທີການອັນລະອຽດຂອງຂະແໜງການ, ທ້ອງຖິ່ນ ທີ່ຕົນຮັບຜິດຊອບຢ່າງປະດິດສ້າງ ແລະ ແທດຕົວຈິງ;

5.) ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ສະພາວະຄວາມເປັນຈິງທຸກດ້ານ ໃນທົ່ວຂະແໜງການ ແລະ ທ້ອງຖິ່ນຂອງຕົນ; ຮູ້ເຮັດວຽກສຶກສາອົບຮົມການເມືອງ-ແນວຄິດ ແລະ ມີບົດຮຽນໃນວຽກງານກໍ່ສ້າງພັກ, ສ້າງພະນັກງານ, ຮູ້ຄຸ້ມຄອງ-ນຳໃຊ້ພະນັກງານຢ່າງເໝາະສົມ; ຮູ້ນຳພາບັນດາອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງອື່ນໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ເຄື່ອນໄຫວຢ່າງມີປະສິດທິຜົນ;

6.) ມີຄວາມສາມາດເຕົ້າໂຮມຄວາມສາມັກຄີພາຍໃນໝູ່ຄະນະ, ສະມາຊິກພັກ, ພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ; ຮູ້ເຕົ້າໂຮມກຳລັງ, ເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງຂອງມະຫາຊົນ ແລະ ເຕົ້າໂຮມຄວາມສາມັກຄີປະຊາຊົນ ແລະຊັ້ນຄົນຕ່າງໆໃນສັງຄົມ;

7.) ໄດ້ຜ່ານການກໍ່ສ້າງ ຫຼື ບຳລຸງທິດສະດີມາກ-ເລນິນ, ການເມືອງ ແລະ ການປົກຄອງຕາມຫຼັກສູດຊັ້ນສູງຂຶ້ນໄປ;

8.) ມີຄວາມຮູ້ ແລະ ສາມາດນຳໃຊ້ຄອມພິວເຕີ ໃນລະດັບດີ;

9.) ຮູ້ພາສາຕ່າງປະເທດໃດໜຶ່ງ ທີ່ຈຳເປັນໃນລະດັບກາງຂຶ້ນໄປ.

## 9.3 ດ້ານແບບແຜນວິທີເຮັດວຽກ

1.) ມີແບບແຜນວິທີການເຮັດວຽກທີ່ມີວິທະຍາສາດ ບົນພື້ນຖານຫຼັກວິຊາການແທດເໝາະກັບຕົວຈິງ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕ, ບັນຫາສຳຄັນທີ່ເປັນຍຸດທະສາດຂອງຂະແໜງ



ການ, ປຶກສາຫາລືເປັນໝູ່ຄະນະ, ມີການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ;

2.) ປະຕິບັດໜ້າທີ່ ຕາມຂອບເຂດສິດ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານຕາມຂັ້ນຕອນ;

3.) ຮູ້ປະສານສົມທົບລະຫວ່າງການນຳພາ ຂອງພັກກັບການເພີ່ມທະວີຄວາມສັກສິດຂອງອົງການລັດ ແລະ ເສີມຂະຫຍາຍບົດບາດບັນດາອົງການຈັດຕັ້ງມະຫາຊົນ, ຮູ້ສົມທົບລະຫວ່າງການຊີ້ນຳຕາມຂະແໜງການຂອງຕົນ;

4.) ມີທັດສະນະມະຫາຊົນຢ່າງຖືກຕ້ອງ, ຮູ້ຊຸກຍູ້ສົ່ງເສີມ-ຟັງຄຳຄິດຄຳເຫັນ, ໃກ້ຊິດຕິດແທດ, ເປັນຮ່ອງ ເປັນໃຍ ແລະ ຮູ້ຮ່ຳຮຽນນຳມະຫາຊົນ, ເຄົາລົບນັບຖືສິດເປັນເຈົ້າຂອງມະຫາຊົນ ແລະ ໄດ້ຮັບຄວາມເຊື່ອຖືຮັກແພງຈາກມະຫາຊົນ, ປົກປ້ອງສິດຜົນປະໂຫຍດອັນຊອບທຳບຸກຄົນ, ລວມໝູ່ ແລະ ຂອງລັດ.

## 9.4 ປະສົບການ

- ເຄີຍດຳລົງຕຳແໜ່ງບໍລິຫານປະເພດ 2 ມາແລ້ວຢ່າງໜ້ອຍ 5 ປີຂຶ້ນໄປ.

## 9.5 ສຸຂະພາບ

- ມີສຸຂະພາບແຂງແຮງດີ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຈັດຕັ້ງ-ພະນັກງານປະສານສົມທົບກັບ ອົງການໄອຍະການປະຊາຊົນ ໃນຂອບເຂດທົ່ວປະເທດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງເຜີຍແຜ່, ເຊື່ອມຊຶມຂໍ້ຕົກລົງສະບັບນີ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 11. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ນິຕິກຳໃດທີ່ຂັດກັບ ຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຄຳສານ ສຸວົງ